ສຸວັນນີ ໂຮມເຊັນເຕີ
SOUVANNY HOME CENTER

# ບົດລາຍງານປະຈຳປີ
# ANNUAL REPORT 2020



# ລາຍລະອຽດ/Contents

ໜ້າ/page


- ✓ **ສານຈາກ ປະທານສະພາບໍລິຫານ/**Message from Chairman of the Board of Directors……….. I-II
- ✓ **ສານຈາກ ຜູ້ອຳນວຍການໃຫຍ່/**Message from Chief Executive Officer (CEO)…………… III-IV
- ✓ **ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ/**Overview of the Company………………………… 1/33
  - ➢ ວິໄສທັດ/Vision
  - ➢ ພາລະກິດ/Mission
  - ➢ ປະຫວັດຄວາມເປັນມາ ໂດຍຫຍໍ້ຂອງ ສຸວັນນີ/Company Background in brief….2-5/33-37
- ✓ **ທົບທວນຜົນການດຳເນີນງານ ປີ2020/**Review of Business Operating Result 2020
  - ➢ ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ2020/Global and Domestic Economy Condition 2020………………………………………………............ 5/37
  - ➢ ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ບໍລິສັດ ປີ2020/The Outstanding Work of the company in Brief 2020…………………………………………………… 6/37
  - ➢ ຜົນການດຳເນີນງານ ປີ2020the Company's Business Operation result 2020…………
    …………………………………………………………………….7-13/38-44
- ✓ **ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ 2020/**General and Important Information of Company 2020
  - ➢ ທີ່ຕັ້ງ ແລະ ເຄືອຂ່າຍ/ Location and Network………………………………….13/45
  - ➢ ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆ ຂອງບໍລິສັດ/Contact Information…………14/45
- ✓ **ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2020/ Securities and Shareholders 2020**
  - ➢ ທຶນຈົດທະບຽນ/Registered Capital…………………………………………..14/45
  - ➢ ຜູ້ຖືຮຸ້ນ/Shareholders……………………………………………………….14/45
- ✓ **ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ/**Organization Structure of Board of Directors, Managing Directors and the Activities of the Board.
  - ➢ ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ/Organization Chart of the Company……….14
  - ➢ ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ/Board of Directors of SVN 2020…………………………………………………………………….15-16
  - ➢ ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ/Director Committee 2020……………………………………………………………………………...17
  - ➢ ການເຄື່ອນໄຫວ ຂອງສະພາບໍລິຫານ/Activities of the Board of Directors.....17-19/45-47
  - ➢ ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ພາຍໃນປີ 2020/Remuneration of Members of Board of Directors 2020........................19/47
- ✓ **ບົດລາຍງານດ້ານການເງິນ ຂອງບໍລິສັດ ປະຈຳປີ 2020/**Financial Statement Report 2020.....20-25/48-53
- ✓ **ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ໃນປີ 2020/**Audit Service Fee 2020............26/54
- ✓ **ຄວາມຮັບຜິດຊອບຕໍ່ສັງຄົມ ປີ2020/**Social Responsibility 2020.
  - ➢ ການມອບພັນທະອາກອນ ປີ2020/Obligation Hand-over 2020............................26/54
  - ➢ ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ2020/Social Assistance 2020...........26-30/54-56

- ✓ **ນະໂຍບາຍການພັດທະນາການຈັດການຄຸ້ມຄອງພາຍໃນ ປີ2020/**Body's Management Policy 2020 …………………………………………………………………………………....30/57
- ✓ **ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ2020/**Risk Management Policy 2020.............................. 30/57
- ✓ **ແຜນດຳເນີນງານປະຈຳ ປີ2021/**BusinessPlan for the year 2021
  - ➢ ແຜນດ້ານວຽກງານການຂາຍໃນປີ 2021/Sales Plan for the year 2021......................31/58
  - ➢ ແຜນດ້ານວຽກງານການຕະຫຼາດໃນປີ 2021/Marketing Plan for the year 2021.........31/58
  - ➢ ແຜນດ້ານວຽກງານບຸກຄະລາກອນໃນປີ 2021/Human Resources Plan for year 2021.....32/58
  - ➢ ແຜນວຽກງານດ້ານພັດທະນາການຈັດການ 2021/Management plan of year 2021…..32/58
  - ➢ ແຜນການລົງທຶນ ແລະ ຂະຫຍາຍກິດຈະການປະຈຳປີ 2021/Investment plan of year 2021 ..........................................................................................................................32/59



ສານຈາກ ປະທານສະພາບໍລິຫານ

## Message from Chairman of the Board of Directors

ເຖິງ ບັນດາທ່ານ ຜູ້ຖືຮຸ້ນ ທີ່ນັບຖື ແລະ ຮັກແພງ/To Respectful Shareholders

ສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມ ສະພາບໍລິຫານ ຄັ້ງທີ 1/2021 ໃນວັນທີ 19 ກຸມພາ 2021 ເວລາ 14:00 ໂມງ ຢູ່ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ສຳນັກງານໃຫຍ່ ຊັ້ນ 4, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ.

The Board of Directors of the Souvanny Home Center Public Company held it's 1st Board Meeting on February 19, 2021, at 2:00 PM at the Souvanny Home Center Public Company, Headquarters, the 4th Floor, Phonethongsavath Village, Chanthaburi District, Vientiane Capital.

ກອງປະຊຸມໄດ້ພິຈາລະນາ 9 ບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ; ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2020 ແລະ ຮ່າງບົດລາຍງານການເງິນປະຈຳປີ 2020; ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2021; ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020; ການແຕ່ງຕັ້ງຜູ້ກວດສອບບັນຊີຈາກພາຍນອກ ແລະ ກຳນົດຄ່າບໍລິການກວດສອບບັນຊີພາຍນອກປີ 2021, ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ; ການຮຽກປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ2020; ກຳນົດການປິດປື້ມບັນຊີຜູ້ຖືຮຸ້ນ ແລະ ການອະນຸມັດໃຫ້ແຕ່ງຕັ້ງຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.

The meeting has considered 9 important agendas namely the consideration of the report of the previous meeting of the Board of Director; the report of the business results of the company for 2020 and a financial draft of the company for 2020; the business plan of the company for 2021; the payment of dividends from the business operation of the company in 2020; the appointment of the external auditor for the year 2021, and determination of remuneration; To consider the appointment of new members of the Executive Council to replace the ones whose tenure is due; the call of common shareholders' meeting for 2020; determination of the date to close the accounting book of shareholders, and an appointment of the inspection committee of shareholders' meeting and vote;

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ຖືຮຸ້ນ ຈະໄດ້ຮັບຊາບ ແລະ ພ້ອມກັນພິຈາລະນາ, ປະກອບສ່ວນສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ ການປະຕິບັດແຜນທຸລະກິດ ປະຈາປີ2021 ດຳເນີນໄປດ້ວຍດີ, ມີປະສິດທິຜົນສູງ ແລະ ຍືນຍົງ.

I hope that our shareholders will see and facilitate the good conditions for the company's management and development for the year 2021 in order to expand our business with continuousness and sustainability

ທ່ານ ອຸ່ນ ຫຼ້າສຸກັນ

Mr. Ounh Lasoukanh

ປະທານສະພາບໍລິຫານ

**Chairman of Board of Directors**



ສານຈາກ ຜູ້ອຳນວຍການໃຫຍ່

**Message from Chief Executive Officer**

ເຖິງ: ທ່ານ ຜູ້ຖືຮຸ້ນທີ່ນັບຖື / To Respectful Shareholders

ໃນປີ 2020 ຜ່ານມາ, ຖ້າມກາງສະພາວະເສດຖະກິດໂລກທີ່ສືບຕໍ່ຖົດຖອຍລົງ ເນື່ອງຈາກພາວະໂລກລະບາດ COIVD-19 ສົ່ງຜົນຕໍ່ພາກພື້ນ ແລະ ປະເທດລາວພວກເຮົານຳ ການຂະຫຍາຍໂຕດ້ານການກໍ່ສ້າງກໍ່ລົດລົງ ພາວະເງິນເຟີ້ ແລະ ຄວາມຜັນຜວນ ຂອງອັດຕາແລກປ່ຽນ ທີ່ເພີ່ມສູງຂຶ້ນໃນປະເທດ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ພວກເຮົາບໍ່ໜ້ອຍໃນການສ້າງຍອດຂາຍ ເຖິງຢ່າງໃດກໍ່ຕາມ ພວກເຮົາກໍ່ສາມາດສືບຕໍ່ຮັກສາການຂະຫຍາຍໂຕ ຂອງຍອດຂາຍທີ 3% ຕາມທີ່ໄດ້ວາງເປົ້າໝາຍໄວ້ ຄວາມສຳເລັດດັ່ງກ່າວກໍ່ຍ້ອນໄດ້ຮັບການອຸ້ມຊູຊ່ວຍເຫລືອ ສະໜັບສະໜູນຈາກທຸກພາກສ່ວນ ທັງພາກລັດຖະບານ, ຜູ້ສະໜອງທັງພາຍໃນ ແລະ ຕ່າງປະເທດ, ພະນັກງານພາຍໃນບໍລິສັດ ຕະຫລອດຈົນເຖິງຄູ່ຮ່ວມທຸລະກິດ, ຜູ້ຖືຮຸ້ນ ແລະ ລູກຄ້າ ທີ່ຄອຍໃຫ້ແນວທາງອູ້ມຊູພວກເຮົາດ້ວຍດີຕະຫລອດມາ.

In 2020, amid the global economic condition is continuous slowdown because of germ outbreak of COVID-19, it not only affects the region but also Laos which makes the expansion of construction sectors reduces, causes inflation and fluctuation of rising exchange rates in the country which is difficult for us to keep up with our sales growth, However, we can continue to maintain sales growth at the 3% as our target set, the reason that we achieved as our goal set because we got support from all sectors, such as government, domestic and foreign suppliers, staffs as well as business partners, shareholders, and a customer who have always supported us.

ໃນປີ 2021 ພວກເຮົາຕັ້ງເປົ້າໝາຍການຂະຫຍາຍໂຕໃນລະດັບ 10% ເນື່ອງຈາກການປະເມີນແລ້ວວ່າ ເສດຖະກິດໂລກ ແລະ ປະເທດລາວ ຍັງສືບຕໍ່ມີຄວາມຫຍຸ້ງຍາກ ແຕ່ພວກເຮົາໃນນາມທີມບໍລິຫານ ກໍ່ຈະສຸມໃສ່ໃຊ້ຄວາມສາມາດ ເພື່ອເຮັດໃຫ້ບໍລິສັດເຂັ້ມແຂງ ແລະ ເຕີບໂຕຕໍ່ໄປ ແລະ ກ້າວໄປສູ່ການສ້າງຜົນຕອບແທນທີ່ດີຂຶ້ນ ແກ່ຜູ້ຖືຮຸ້ນແລະ ສຸດທ້າຍ ພວກຂ້າພະເຈົ້າ, ໃນນາມ ທີມບໍລິຫານຂໍສະແດງຄວາມ ຂອບໃຈເປັນຢ່າງຍິ່ງ ທີ່ທ່ານໃຫ້ຄວາມໄວ້ວາງໃຈພວກເຮົາ ແລະ ຂໍອວຍພອນໃຫ້ຜູ້ຖືຫຸ້ນທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານທຸກໆທ່ານ.

By 2021, we target growth of 10% as our assessment of the economy of the world and Laos which still have difficulties, but we, a management team, will focus on leveraging our ability to keep our

company strong and growing, and bring good benefit to shareholders and Finally, we, on behalf of Management team would like to thank you so much for your trust-ness and wish all shareholders good health and success in all your duty

ທ່ານ ວັດດານາ ສຸຄະບັນດິດ

Mr. Waddana SOUKHABANDITH

ຜູ້ອຳນວຍການໃຫຍ່

**Chief Executive Officer (CEO)**

# *ບົດລາຍງານປະຈຳປີ 2020*

## ✓ ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ.

### ➢ ວິໄສທັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະເປັນຜູ້ນຳການພັດທະນາ ການຄ້າວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ທີ່ທັນສະໄໝໃນທຸກຊ່ອງທາງການຂາຍ ເພື່ອຕອບສະໜອງລູກຄ້າທຸກລະດັບໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ

### ➢ ພາລະກິດ

- ພັດທະນາການນຳເອົາສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ຈາກທຸກຂົງເຂດ ທີ່ມີຄຸນນະພາບ ແລະ ລາຄາຍຸດຕິທຳ ໄປສູ່ທຸກກຸ່ມລູກຄ້າ ທຸກລະດັບລູກຄ້າ ແລະ ທຸກພື້ນທີ່ ຂອງປະເທດລາວ, ປະກອບສ່ວນເປັນອົງປະກອບໜຶ່ງ ທີ່ຂັບເຄື່ອນເສດຖະກິດລາວ.

- ພັດທະນາການບໍລິການ ແລະ ການສົ່ງມອບ ໃນທຸກຊ່ອງທາງການຂາຍທັງອອບລາຍ ແລະ ອອນລາຍ ໃຫ້ທັນສະໄໝ.

- ເສີມສ້າງຄວາມສາມາດ ຂອງບຸກຄະລາກອນ ແລະ ພະນັກງານສືບທອດຢ່າງຕໍ່ເນື່ອງ ເພື່ອໃຫ້ມີສັກກະຍະພາບສາມາດຮັບມືກັບການປ່ຽນແປງ ຂອງເທັກໂນໂລຢີໃໝ່ໃນໄລຍະປ່ຽນຜ່ານ ແລະ ພຶດຕິກຳ ຂອງຜູ້ບໍລິໂພກໃນຍຸກໃໝ່.

- ພັດທະນາການເຊື່ອມໂຍງການຄ້າ ຂອງລາວໃຫ້ຕິດພັນກັບການຄ້າ ຂອງອາຊຽນ ແລະ ໂລກ, ໃນຖານະ ທີ່ປະເທດລາວເປັນໃຈກາງ ຂອງພາກພື້ນ.

- ຮັກສາທຸກຜົນປະໂຫຍດ ຂອງທຸກພາກສ່ວນ ທີ່ມີສ່ວນໄດ້ສ່ວນເສຍກັບບໍລິສັດ ພ້ອມກັບປະກອບສ່ວນ ຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອພັດທະນາຕາມທິດສີຂຽວຍືນຍົງ.

## ➢ ປະຫວັດຄວາມເປັນມາ ໂດຍຫຍໍ້ ຂອງ ສຸວັນນີ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນເຊັ່ນ: ກະໂລ, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນີເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ໂດຍມີລະບົບໂປຣແກຣມຄອມພິວເຕີ ທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນຫຼາຍກວ່າ 20 ໝວດຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົບແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: **"ຍົກລະດັບສິນຄ້າ ແລະ ບໍລິການໃຫ້ມີຄຸນະພາບ ສົ່ງມອບຖືກຕ້ອງ ຄົບຖ້ວນ ທັນເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ".** ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນສະແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ "ສຸວັນນີ" (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ປີ 1988 ໂດຍ ທ່ານ ນາງ ສຸວັນນີ ສຸຄະບັນດິດ (ທ່ານ ນາງ ສຸວັນນີ), ທ່ານ ວັດດານາ ສຸຄະບັນດິດ (ທ່ານ ວັດດານາ) ແລະ ທ່ານ ພັນໂນລາ ສຸຄະບັນດິດ (ທ່ານ ພັນໂນລາ)

### ▪ ປີ ແລະ ເຫດການສຳຄັນ

### ປີ 1988

▪ ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍເລີ່ມມາຈາກ ທ່ານ ນາງ ສຸວັນນີ ໄດ້ເບິ່ງເຫັນເຖິງໂອກາດການຂະຫຍາຍຕົວຂອງ ສປປ ລາວ ໃນອະນາຄົດ ປະກອບກັບ ທ່ານ ວັດດານາ ໄດ້ສຳເລັດການສຶກສາດ້ານສະຖາປັດຕະຍະກຳ ແລະ ມີປະສົບການກ່ຽວກັບການກໍ່ສ້າງ, ພ້ອມຍັງເປັນຊ່ວງທີ່ ສປປ ລາວ ກຳລັງເລີ່ມມີການເຕີບໃຫຍ່ຂະຫຍາຍຕົວດ້ານການກໍ່ສ້າງພື້ນຖານໂຄງລ່າງ. ສະນັ້ນ, ຈຶ່ງໄດ້ເລີ່ມຕົ້ນດຳເນີນທຸລະກິດຈັດຈຳໜ່າຍວັດສະດຸກໍ່ສ້າງທົ່ວໄປ ໃນຮ້ານຄ້າຂະໜາດໜຶ່ງຫ້ອງແຖວ (ພື້ນທີ່ປະມານ 50 ຕາແມັດ) ທີ່ ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ປັດຈຸບັນເປັນສາຂາຍ່ອຍ (ສາຂາທົ່ງຂັນຄຳ) ດ້ວຍທຶນຈົດທະບຽນ 3,250,000 ກີບ.

### ປີ 1993

▪ ເປັນຊ່ວງທີ່ພາກການກໍ່ສ້າງໃນ ສປປ ລາວ ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ, ຄວາມຕ້ອງການສິນຄ້າປະເພດວັດສະດຸກໍ່ສ້າງເພີ່ມຂຶ້ນ ການແຂ່ງຂັນທາງດ້ານທຸລະກິດວັດສະດຸກໍ່ສ້າງຈຶ່ງເພີ່ມຂຶ້ນ ອັນເປັນສາເຫດເຮັດໃຫ້ຕົ້ນທຶນສິນຄ້າທີ່ນຳເຂົ້າມາຈັດຈຳໜ່າຍບໍ່ສາມາດແຂ່ງຂັນກັບຄູ່ແຂ່ງໄດ້. ເພື່ອໃຫ້ທຸລະກິດສາມາດນຳສິນຄ້າມາຈາກໂຮງງານຜູ້ຜະລິດໄດ້ໂດຍກົງໃນຕົ້ນທຶນທີ່ຖືກລົງ, ປະກອບກັບທາງ ພັກ ແລະ ລັດຖະບານ ມີນະໂຍບາຍສະໜັບສະໜູນໃຫ້ຊື້ກົກຂາຍປາຍ ຫຼື ການຫຼຸດຜ່ອນການຊື້ສິນຄ້າຜ່ານພໍ່ຄ້າຄົນກາງຕາມຊາຍແດນ ເພື່ອໃຫ້ຜູ້ບໍລິໂພກໃນ ສປປ ລາວ ໄດ້ຊົມໃຊ້ສິນຄ້າໃນລາຄາຖືກລົງ ອັນນຳໄປສູ່ການຍົກລະດັບຄວາມສາມາດໃນການແຂ່ງຂັນໃຫ້ສູງຂຶ້ນ. ພ້ອມທັງຜູ້ບໍລິຫານບໍລິສັດ ຕ້ອງການໃຫ້ບໍລິສັດມີໂຄງສ້າງການຈັດການທີ່ເປັນລະບົບ ແລະ ມີແບບແຜນຫຼາຍຂຶ້ນ. ສະນັ້ນ, ບໍລິສັດ ຈຶ່ງໄດ້ມີການຈົດທະບຽນເປັນ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນຈົດທະບຽນ 100,000,000 ກີບ.

## ປີ 2000

- ນັບແຕ່ປີນັ້ນເປັນຕົ້ນມາ, ທຸລະກິດຂອງບໍລິສັດ ໄດ້ຮັບການຕອບສະໜອງທີ່ດີຂຶ້ນມາໂດຍຕະຫຼອດ ແລະ ໄດ້ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ຄວາມຕ້ອງການສິນຄ້າ ທາງດ້ານວັດສະດຸກໍ່ສ້າງເພີ່ມຂຶ້ນ ຕາມການຈະເລີນເຕີບໂຕຂອງ ສປປ ລາວ, ປະກອບກັບ ທ່ານ ກິດສະດາ ສຸດຊະບັນດິດ ໄດ້ສໍາເລັດການສຶກສາຈາກຕ່າງປະເທດ ແລະ ກໍ່ໄດ້ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດສາຂາໂພນຕ້ອງຂຶ້ນ ເພື່ອຈັດຈໍາໜ່າຍ ວັດສະດຸກໍ່ສ້າງ, ຕົບແຕ່ງ, ສ້ອມແປງເຮືອນ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະໄໝເປັນຮ້ານທໍາອິດຂອງ ສປປ ລາວ ດ້ວຍຂະໜາດ 1,500 ຕາແມັດ, ມີເນື້ອທີ່ສາງ 2,000 ຕາແມັດ, ເນື້ອທີ່ຈອດລົດ 20 ຄັນ ແລະ ມີການຍ້າຍສໍານັກງານໃຫຍ່ຈາກ ສາຂາທົ່ງຂັນຄໍາ ມາເປັນ ສາຂາໂພນຕ້ອງ (ສໍານັກງານໃຫຍ່ໃນປັດຈຸບັນ).




## ປີ 2004

- ສປປ ລາວ ໄດ້ເປີດກວ້າງຫຼາຍຂຶ້ນໃນພາກການລົງທຶນ ແລະ ເພື່ອຮອງຮັບການເປັນເຈົ້າພາບການແຂ່ງຂັນກິລາຊີເກມ ຄັ້ງທີ 25 ເຊິ່ງຈະຈັດຂຶ້ນໃນປີ 2009, ບໍລິສັດ ໄດ້ມີການເປີດສາຂາເພີ່ມຂຶ້ນ ທີ່ບ້ານນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ (ສາຂາສີໄຄ) ເຊິ່ງເປັນສູນຈັດຈໍາໜ່າຍສິນຄ້າ ແລະ ບໍລິການ ທາງດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ທີ່ໃຫຍ່ທີ່ສຸດໃນ ສປປ ລາວ ໂດຍມີຂະໜາດພື້ນທີ່ວາງສະແດງສິນຄ້າປະມານ 2,000 ຕາແມັດ, ພື້ນທີ່ສາງປະມານ 5,000 ຕາແມັດ ແລະ ພື້ນທີ່ຈອດລົດ 60 ຄັນ.




## ປີ 2015

- ໃນປີ 2015, ບໍລິສັດ ໄດ້ມີການປັບປຸງວິສາຫະກິດເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່, ສະພາບຄວາມຕ້ອງການ ຫຼື ຄວາມຈໍາເປັນທາງທຸລະກິດ ແລະ ບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເຊິ່ງ ບໍລິສັດ ໄດ້ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈໍາກັດຜູ້ດຽວ ມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈໍາກັດ , ດ້ວຍທຶນຈົດທະບຽນ 500,000,000 ກີບ.
- ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ 28 ກໍລະກົດ 2015 ທີ່ໄດ້ມີວາລະພິຈາລະນາປັບປຸງມູນຄ່າທີ່ກໍານົດຮຸ້ນຂອງບໍລິສັດ ຈາກເດີມ 50,000 ກີບຕໍ່ຮຸ້ນ ເປັນ 2,000 ກີບຕໍ່ຮຸ້ນ, ພິຈາລະນາເລື່ອງການເພີ່ມທຶນຂອງບໍລິສັດ ຈາກເດີມ 500,000,000 ກີບ ເປັນ 280.00 ຕື້ກີບ ໂດຍມີຈໍານວນຮຸ້ນທັງໝົດ 140,000,000 ຮຸ້ນ.

- ບໍລິສັດ ໄດ້ມີການຮ່ວມລົງທຶນກັບ ບໍລິສັດ ໂກວບ້ອນເຮົ້າ ອິນເຕີເນຊັນແນວ ຈຳກັດ ເຊິ່ງເປັນບໍລິສັດຮ່ວມທຶນ ລະຫວ່າງ ບໍລິສັດ ສະຫຍາມໂກວບ້ອນເຮົ້າ ຈຳກັດ (ມະຫາຊົນ) ແລະ ບໍລິສັດ ປູນຊີເມັນໄທ ຈຳກັດ ເຊິ່ງເປັນຜູ້ປະກອບການຈັດຈຳໜ່າຍວັດສະດຸກໍ່ສ້າງ ແລະ ຕົບແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວຍັງເປັນການຖ່າຍທອດຄວາມຮູ້ໃນການດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນການແຂ່ງຂັນທາງທຸລະກິດຂອງບໍລິສັດໃນໄລຍະຍາວ
- ໃນວັນທີ 13 ກັນຍາ 2015 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ "ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ" ພ້ອມກັບໄດ້ເພີ່ມທຶນຈົດທະບຽນເພື່ອຮອງຮັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 25,000,000 ຮຸ້ນ, ມູນຄ່າກຳນົດ (Par Value) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ໃນ ສປປ ລາວ.
- ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການຕາມມາດຕະຖານ ISO9001:2008 ວັນທີ 25/09/2015.
- ພ້ອມດຽວກັນນັ້ນ ທາງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ໄດ້ເປີດຈອງຮຸ້ນ (IPO) ລະຫວ່າງວັນທີ 29-30/11/-01/12/2015 ລວມທັງໝົດ 25,000,000 ຮຸ້ນ ໃນລາຄາຂາຍ 3,100 ກີບ/ຮຸ້ນ.
- ນອກຈາກນັ້ນ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈົດທະບຽນເຂົ້າເປັນ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ໃນວັນທີ 11 ທັນວາ 2015 ຢ່າງເປັນທາງການ.

## ປີ 2016

- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເມື່ອວັນທີ 22 ເມສາ 2016 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ບ້ານ ໂພນທັນ, ຖະໜົນ T4, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ **118 ທ່ານ**, ຖືຮຸ້ນລວມ 157,735,300 ຮຸ້ນ ຄິດເປັນ 95.60% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມພິຈາລະນາ 9 ວາລະ ວາລະສຳຄັນຄື: ການພິຈາລະນາເງິນປັນຜົນປະຈຳປີ 2015 ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິ ແບ່ງປັນເງິນປັນຜົນເປັນຈຳນວນເງິນ 45 ກີບ/ຮຸ້ນ.

## ປີ 2017 (ເດືອນ01)




- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ເປີດສາຂາໃໝ່ທີ່ ບ້ານໂຊກໃຫຍ່ (ສັ້ນທາງ 450 ປີ), ເມືອງໄຊເສດຖາ, ແຂວງ ນະຄອນຫຼວງວຽງຈັນ ໃນວັນທີ 30/01/2017 ດ້ວຍພື້ນທີ່ວາງສະແດງສິນຄ້າບໍ່ຕ່ຳກ່ວາ 12,000 ຕາແມັດ ໂດຍການເປີດ ສາຂາ ໂຊກໃຫຍ່ (ເສັ້ນທາງ 450 ປີ) ໃນນະຄອນຫຼວງວຽງຈັນ ດ້ວຍສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ເຊິ່ງໄດ້ຮັບການຕອບຮັບຈາກ ປະຊາຊົນ ຊາວນະຄອນຫຼວງໄດ້ເປັນຢ່າງດີ.




- ປີ 2017 ເດືອນ 9 ທາງ ບໍລິສັດ ໄດ້ມີພິທີເປີດອີກໜຶ່ງສາຂາຄື: ສາຂາ ປາກຊັນ ໃນວັນທີ 30/09/2017 ເຊິ່ງເປັນສາຂາທຳອິດ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ທີ່ໄດ້ເປີດໃຫ້ບໍລິການຢູ່ຕ່າງແຂວງ ທີ່ຢູ່ ບ້ານ ສີສະອາດ ເມືອງ ປາກຊັນ ແຂວງ ບໍລິຄຳໄຊດ້ວຍພື້ນທີ່ວາງສະແດງສິນຄ້າບໍ່ຕ່ຳກ່ວາ 7,500 ຕາແມັດ ແລະ ເນື້ອທີ່ສາງປະມານ 7,500 ຕາແມັດ ໂດຍມີສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ໂດຍການເຂົ້າຮ່ວມ ຂອງ ທ່ານ ກອງແກ້ວ ໄຊສົງຄາມ ເຈົ້າແຂວງບໍລິຄຳໄຊ ໂດຍໄດ້ຮັບການຕອບຮັບ ຈາກຊາວເມືອງ ປາກຊັນ ກໍ່ຄື ຊາວແຂວງ ບໍລິຄຳໄຊ ເປັນຢ່າງດີ.

## ປີ 2018.




- ພາຍໃນປີ 2018, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດ ອີກໜຶ່ງສາຂາ ທີ່ທາງພາກໃຕ້ ເຊິ່ງກວມເອົາຕະຫຼາດພາກໃຕ້ຄື: ແຂວງ ຈຳປາສັກ, ແຂວງ ສາລະວັນ , ແຂວງ ເຊກອງ ແລະ ແຂວງ ອັດຕະປື ນັ້ນກໍ່ຄື: ສາຂາ ປາກເຊ ທີ່ຕັ້ງຢູ່ ບ້ານ ກາງ ນະຄອນປາກເຊ ແຂວງ ຈາປາສັກ ເຊິ່ງເປີດໃຫ້ບໍລິການຢ່າງເປັນທາງການເມື່ອວັນທີ 17 ມິຖຸນາ 2018 ໂດຍການເຂົ້າຮ່ວມພິທີເປີດຂອງ ທ່ານ ສິມສະຫວາດ ເລັ່ງສະຫວັດ ທີ່ປຶກສາຄະນະບໍລິຫານສູນກາງພັກ ແລະ ທ່ານ ປອ ບຸນຖອງ ດີວີໄຊ ເຈົ້າແຂວງ ແຂວງ ຈຳປາສັກ.
- ແລະ ໃນວັນທີ 22 ກັນຍາ 2018 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການມາດຕະຖານ ISO 9001 ສະບັບປີ 2015.

## ✓ ທົບທວນຜົນການດຳເນີນງານ ປີ 2020.

### ➢ ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ 2020

ປີ 2020 ເປັນປີທີ່ໂລກປະເຊີນກັບວິກິດເສດຖະກິດຈາກສົງຄາມການຄ້າລະຫວ່າງ ຈີນ ແລະ ສະຫະລັດອາເມລິກາ, ຄວາມຂັດແຍ້ງໃນພາກພື້ນຕາເວັນອອກກາງ ແລະ ຄວາມຂັດແຍ້ງໃນອາຊີຕາເວັນອອກ ລວມທັງພາວະການແຜ່ລະບາດຂອງເຊື້ອພະຍາດ COVID-19 ເຮັດໃຫ້ສົ່ງຜົນໂດຍລວມຕໍ່ເສດຖະກິດລາວ, ປະກອບກັບຄວາມຫຍຸ້ງຍາກໃນດ້ານງົບປະມານຂອງເສດຖະກິດພາຍໃນປະເທດລາວ ເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວບໍ່ເປັນໄປຕາມເປົ້າໝາຍທີ່ວາງໄວ້.

## ➢ ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2020

ປີ 2020 ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພວກເຮົາໄດ້ປະສົບຜົນສຳເລັດໃນການສ້າງຍອດຂາຍໂດຍມີການເຕີບໂຕເກືອບ 3% ເຊິ່ງເປັນໄປຕາມແຜນດັດປັບເປົ້າໝາຍທີ່ໄດ້ວາງໄວ້ ແລະ ຍັງໄດ້ວາງແຜນການຂະຫຍາຍຊ່ອງທາງການຂາຍ ແລະ ຂອບເຂດພື້ນທີ່ການຂາຍໃຫ້ກ້ວາງຂວາງຕື່ມ, ພ້ອມກັນນັ້ນກໍ່ກຽມພື້ນຖານ ເພື່ອຮອງຮັບການຂະຫຍາຍໂຕເມື່ອຕະຫລາດມີການຟື້ນໂຕກັບມາ ລວມທັງການຮອງຮັບການຂະຫບາຍໂຕ ຂອງການກໍ່ສ້າງຫຼັງເສັ້ນທາງລົດໄຟ ລາວ-ຈີນ ສຳເລັດໃນປີ 2022

- ການດຳເນີນທຸລະກິດ ແລະ ຜົນການດຳເນີນງານປີ 2020
  - ລາຍຮັບ




ບໍລິສັດມີລາຍຮັບລວມໃນປີ 2019 ເທົ່າກັບ 385.643 ລ້ານກີບ ແລະ ໃນປີ 2020 ໄດ້ມີລາຍຮັບລວມເພີ່ມຂຶ້ນມາເປັນ 396.712 ລ້ານກີບ ເຫັນໄດ້ວ່າມີລາຍຮັບລວມເພີ່ມຂຶ້ນ ໃນອັດຕາສ່ວນ 2,87 ສ່ວນຮ້ອຍຈາກລາຍຮັບປີ 2019 ເນື່ອງຈາກວ່າບໍລິສັດໄດ້ມີການເພີ່ມຄວາມຫຼາກຫຼາຍ ຂອງສິນຄ້າ ແລະ ມີການເພີ່ມຈຳນວນສິນຄ້າໃໝ່ໆເຂົ້າມາ ພ້ອມດຽວກັນນັ້ນ ບໍລິສັດຍັງໄດ້ມີລາຍຮັບຈາກສາຂາໃໝ່ເພີ່ມຂຶ້ນມາຕາມລຳດັບ.



- **ກຳໄລ-ຂາດທຶນ**







ບໍລິສັດມີກຳໄລສຸດທິໃນປີ 2019 ເທົ່າກັບ 11.210 ລ້ານກີບ ແລະ ມີອັດຕາກຳໄລສຸດທິເທົ່າກັບ 2,91 ສ່ວນຮ້ອຍ ແລະ ໃນປີ 2020 ບໍລິສັດໄດ້ມີກຳໄລສຸດທິ ເພີ່ມຂຶ້ນເທົ່າກັບ 12.009 ລ້ານກີບ ມີອັດຕາກຳໄລສຸດທິເທົ່າກັບ 3,03 ສ່ວນຮ້ອຍ ການທີ່ບໍລິສັດໄດ້ມີກຳໄລສຸດທິເພີ່ມຂຶ້ນ ເນື່ອງຈາກ ບໍລິສັດ ໄດ້ມີລາຍຮັບຈາກການຂາຍ ແລະ ລາຍຮັບອື່ນໆ ຈາກສາຂາໃໝ່ເພີ່ມຂຶ້ນ ພ້ອມດຽວກັນນັ້ນກໍ່ຍັງມີກຳໄລ ຈາກອັດຕາແລກປ່ຽນເພີ່ມຂຶ້ນຕາມລຳດັບ.

- **ລວມຊັບສິນ**



ຊັບສິນລວມໃນ ວັນທີ 31 ທັນວາ 2019 ເທົ່າກັບ 785.615 ລ້ານກີບ ເພີ່ມຂຶ້ນເປັນ 869.890 ລ້ານກີບໃນວັນທີ 31 ທັນວາ 2020 ການທີ່ມີຊັບສິນລວມເພີ່ມຂຶ້ນຍ້ອນວ່າ ບໍລິສັດໄດ້ມີການຂະຫຍາຍສາຂາ ແລະ ຊື້ອຸປະກອນ ສໍາລັບສາຂາໃໝ່ເຊັ່ນ: ສາຂາທ່າແຂກ ເພີ່ມຂຶ້ນ ພ້ອມດຽວກັນນັ້ນ ເຄື່ອງສະຕ໋ອກໃນສາງກໍ່ເພີ່ມຂຶ້ນ ຕາມການຂະຫຍາຍສາຂາເຫຼົ່ານັ້ນ.

- **ລວມໜີ້ສິນ**




ໜີ້ສິນລວມໃນວັນທີ 31 ທັນວາ 2019 ເທົ່າກັບ 158.608 ລ້ານກີບ ເພີ່ມຂຶ້ນເປັນ 166.022 ລ້ານກີບ ເຊິ່ງໜີ້ສິນທີ່ເພີ່ມຂຶ້ນສ່ວນໃຫຍ່ແມ່ນ ໜີ້ສິນໝູນວຽນ ເພື່ອການຄ້າ ໄດ້ແກ່ ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນຈາກສະຖາບັນການເງິນ ແລະ ອີກສ່ວນໜຶ່ງແມ່ນ ເງິນມັດຈໍາຮັບຈາກລູກຄ້າ ເຊິ່ງວ່າໄດ້ນໍາໃຊ້ເຂົ້າໃນການດໍາເນີນທຸລະກິດ ຂອງບໍລິສັດ.

- **ລວມສ່ວນທຶນຈາກຜູ້ຖືຮຸ້ນ**




| ຫົວໜ່ວຍ: ລ້ານກີບ | **31 ທັນວາ 2019** | **31 ທັນວາ 2020** |
|---|---|---|
| ທຶນຈົດທະບຽນ: | 330.000 | 330.000 |
| ສ່ວນເກີນຈາກການຈໍາໜ່າຍຮຸ້ນ | 24.735 | 24.735 |
| ເງິນສໍາຮອງຕາມກົດໝາຍ: | 4.773 | 5,973 |
| ເງິນສໍາຮອງອື່ນໆ | 4.523 | 5.723 |
| ກໍາໄລສະສົມ: | 157.575 | 164.542 |
| ລາຍການທີ່ມີການປັບປຸງ: | 105.400 | 172.891 |
| **ລວມທຶນຈາກຜູ້ຖືຮຸ້ນ** | **627.007** | **703.868** |

ໃນວັນທີ 31 ທັນວາ 2019 ລວມທຶນຈາກຜູ້ຖືຮຸ້ນທັງໝົດເທົ່າກັບ 627.007 ລ້ານກີບ ເຊິ່ງໃນວັນທີ 31 ທັນວາ 2020 ເພີ່ມຂຶ້ນເປັນ  703.868 ລ້ານກີບ ເຊິ່ງມາຈາກບໍລິສັດໄດ້ມີການຫັກເງິນສຳຮອງຕາມກົດໝາຍ ແລະ ເງິນສໍາຮອງອື່ນໆເພີ່ມເຂົ້າມາ ນອກຈາກນັ້ນຍັງມີກຳໄລສະສົມເພີ່ມຂຶ້ນຖ້າທຽບໃສ່ປີ 2019 ຈາກ 157.575 ລ້ານກີບ ເປັນ 164.542 ລ້ານກີບ ເນື່ອງຈາກໄດ້ມີກາໄລສຸດທິພາຍໃນປີເພີ່ມຂຶ້ນ ພ້ອມດຽວກັນນັ້ນຍັງມີອັດຕາແລກປ່ຽນຈາກການແປງຄ່າງົບການເງິນທີ່ເພີ່ມຂຶ້ນຕາມລຳດັບ.

- **ອັດຕາສ່ວນໜີ້ຕໍ່ທຶນ D/E Ratio**




ໃນປີ 2019 ມີຍອດໜີ້ສິນຕໍ່ທຶນເທົ່າກັບ 0,25 ເທົ່າ ເຊິ່ງໃນປີ 2020 ມີຍອດໜີ້ສິນຕໍ່ທຶນຫຼຸດລົງເທົ່າກັບ 0,24 ເທົ່າ ເນື່ອງຈາກບໍລິສັດໄດ້ມີໜີ້ສິນໄລຍະຍາວຫຼຸດລົງ ພ້ອມດຽວກັນນັ້ນ ຍັງມີກຳໄລສະສົມເພີ່ມຂຶ້ນ ເນື່ອງຈາກມີກຳໄລປະຈຳປີເພີ່ມຂຶ້ນຕາມລຳດັບ. ໂດຍຕາມຫຼັກເກນແລ້ວການທີ່ມີໜີ້ສິນຕໍ່ທຶນທີ່ຕໍ່າກວ່າ 1 ຖືວ່າດີ ເຊິ່ງຈະສະແດງໃຫ້ເຫັນເຖິງຄວາມສ່ຽງເລື່ອງພາລະໜີ້ສິນໜ້ອຍ, ມີຄວາມສາມາດໃນການກູ້ຢືມເພີ່ມຂຶ້ນ.

## ➢ ວຽກງານດ້ານການຕະຫຼາດ ປີ2020

### ❖ ຍຸດທະສາດດ້ານຜະລິດຕະພັນ (Product):

- ໃນປີ 2020 ທີ່ຜ່ານມາ ທາງ ບໍລິສັດ ໄດ້ສືບຕໍ່ພັດທະນາ ແລະ ສ້າງສິນຄ້າຍີ່ຫໍ້ຂອງຕົວເອງເພີ່ມຂຶ້ນ ທີ່ມີຄຸນະພາບ ແລະ ສາມາດແຂ່ງຂັນດ້ານລາຄາ ໃນທ້ອງຕະຫຼາດໄດ້.
- ໄດ້ມີການຈັດສັນສິນຄ້າໃຫ້ເປັນໝວດໝູ່ ທີ່ຖືກຕ້ອງ ແລະ ກໍານົດຈຸດຢືນ ຂອງສິນຄ້າແຕ່ລະໂຕຢ່າງຊັດເຈນ ເພື່ອກໍານົດແນວທາງ ປະຕິບັດໃຫ້ມີປະສິດຕິພາບ
- ໄດ້ມີການກໍານົດການຮັບປະກັນສິນຄ້າ ໃນແຕ່ລະໝວດ ທີ່ເຫັນວ່າມີຄວາມຈໍາເປັນ ເພື່ອສ້າງຄວາມໝັ້ນໃຈໃຫ້ລູກຄ້າ ໃນດ້ານ ຄຸນນະພາບສິນຄ້າ.

❖ **ຍຸດທະສາດດ້ານຊ່ອງທາງການຈັດຈຳໜ່າຍ (Place)**

- ໃນປີ 2020 ທີ່ຜ່ານມາ ສຸວັນນີ ໂຮມເຊັນເຕີ ໄດ້ສືບຕໍ່ສ້າງຄວາມສຳພັນທີ່ດີ ກັບກຸ່ມລູກຄ້າ ໃນຊ່ອງທາງຕ່າງໆ ບໍ່ວ່າຈະເປັນລູກຄ້າໜ້າຮ້ານ,ຮ້ານຄ້າຊ່ວງ, ໂຄງການ, ຊ່າງ ແລະ ນັກຮຽນວິຊາຊີບ ໂດຍຜ່ານ ໂປຣໂມຊັນຫຼາກຫຼາຍ.
- ໄດ້ສືບຕໍ່ພັດທະນາເວບໄຊ ແລະ ສ້າງ ສຸວັນນີ APP ທີ່ລູກຄ້າສາມາດເລືອກຊື້ສິນຄ້າໄດ້ ທາງອອນລາຍ ເພື່ອສ້າງຄວາມສະດວກໃຫ້ລູກຄ້າ ແລະ ຫຼີກເວັ້ນການທາງເດີນ ເພື່ອປ້ອງກັນການຕິດເຊື້ອພະຍາດໂຄວິດ-19.

❖ **ຍຸດທະສາດການສົ່ງເສີມການຕະຫຼາດ (Promotion)**

- **ການໂຄສະນາ:**

ພວກເຮົາໄດ້ເຮັດໂຄສະນາຫຼາຍຊ່ອງທາງ ເພື່ອສ້າງຄວາມຮັບຮູ້ ຕາມໝວດສິນຄ້າ ສະເພາະເຈາະຈົງ ທີ່ເປັນຈຸດແຂງ ຂອງອົງກອນ ໂດຍຜ່ານຊ່ອງທາງສື່ສານຕ່າງໆເຊັ່ນ:

- ຜ່ານສື່ສິ່ງພິມເຊັ່ນ: ໃບປິວ ແລະ ໜັງສືພິມ
- ຜ່ານປ້າຍໂຄສະນາເຊັ່ນ: ປ້າຍໂຄສະນາແຄມທາງໃຫຍ່, ປ້າຍໜ້າຫ້ອງຂາຍ
- ຜ່ານສື່ວິທະຍຸເຊັ່ນ: ວິທະຍຸແຂວງ ບໍລິຄຳໄຊ, ແຂວງ ຄຳມ່ວນ ແລະ ແຂວງ ຈຳປາສັກ.
- ຜ່ານສື່ອອນລາຍ (Online)ເຊັ່ນ: Website: www.souvanny.com, Facebook: Souvanny Home Center, Line official, Instagram, Youtube ແລະ ອື່ນໆ

- **ການສົ່ງເສີມການຂາຍ**

ພວກເຮົາໄດ້ເຮັດ ກິດຈະກຳສົ່ງເສີມການຂາຍຫຼາຍຮູບແບບ ບໍ່ວ່າຈະເປັນການສົ່ງເສີມການຂາຍ ໂດຍຜ່ານພະນັກງານຂາຍ, ຜ່ານພໍ່ຄ້າຄົນກາງ ແລະ ມຸ້ງເນັ້ນຕໍ່ລູກຄ້າເອງເຊັ່ນ:

- ກິດຈະກຳ Souvanny Family Club ສະໝັກສະມາຊິກ ສະສົມຄະແນນ ແລກຂອງລາງວັນ ເພື່ອສ້າງລູກຄ້າປະຈຳ.
- ກິດຈະກຳ ຊື້ຄົບຮັບເລີຍ ໂດຍບໍ່ຕ້ອງລຸ້ນ ເພື່ອສ້າງຄວາມປະທັບໃຈ ໃຫ້ລູກຄ້າທັນທີ
- ກິດຈະກຳ ຫຼຸດລາຄາພິເສດ, ສິນຄ້ານາທີທອງ ແລະ ໂປຣຕ່າງໆ ເຊັ່ນ: ງານເປີດສາຂາໃໝ່, ງານແຟ, ຄົບຮອບສາຂາ ແລະ ຫຼຸດຕາມລະດູການ.







## ➢ ວຽກງານດ້ານບຸກຄະລາກອນ ປີ2020

- ໄດ້ມີການເລື່ອນຕຳແໜ່ງໃຫ້ພະນັກງານທີ່ມີຜົນງານດີເດັ່ນປະຈຳປີ ແລະ ປັບຂຶ້ນເງິນເດືອນໃຫ້ພະນັກງານ ຫຼາຍຕຳແໜ່ງ
- ໄດ້ມີການສົ່ງເສີມຄວາມຮູ້ໃຫ້ແກ່ພະນັກງານ ໂດຍຜ່ານການສຳມະນາທັງພາຍໃນ ແລະ ພາຍນອກຢ່າງເປັນ ລະບົບ ຕໍ່ເນື່ອງທຸກເດືອນໂດຍສະເພາະ ທາງດ້ານ ຄວາມຮູ້ສິນຄ້າ, ເຕັກນິກການຂາຍ, ການບໍລິການ ແລະ ວິຊາສະເພາະທີ່ເຫັນວ່າຈຳເປັນ
- ໃນເບື້ອງສະຫວັດດີການ ພວກເຮົາໄດ້ເອົາໃຈໃສ່ ແລະ ເບີກຈ່າຍເງິນເດືອນໃຫ້ພະນັກງານເປັນປົກກະຕິ

**ອັດຕາການສະເລ່ຍອາຍຸຂອງພະນັກງານພາຍໃນອົງກອນ**




- **ກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ**
  - ໄດ້ມີການຈັດກິດຈະກຳພາພະນັກງານໄປທ່ອງທ່ຽວ
  - ໄດ້ຈັດກິດຈະກຳ Team Building ເພື່ອໃຫ້ ພະນັກງານເຮັດວຽກເປັນທີມ, ການກ້າສະແດງ ຄວາມຄິດເຫັນ ແລະ ສ້າງຄວາມສາມັກຄີ.



## ➢ ວຽກງານດ້ານການລົງທຶນ ປີ2020










ໃນຊ່ວງຫຼາຍໆປະເທດທົ່ວໂລກ ກຳລັງປະເຊີນກັບປັນຫາການແຜ່ລະບາດ ຂອງເຊື້ອພະຍາດໂຄວິດ-19 ເຊິ່ງເລີ່ມແຕ່ປ້າຍປີ 2019ນັ້ນ ມັນໄດ້ສ້າງຜົນກະທົບຕໍ່ລະບົບເສດຖະກິດ ແລະ ການເປັນຢູ່ຂອງປະຊາຊົນທົ່ວໂລກຢ່າງຮຸນແຮງ ແຕ່ເຖິງຢ່າງໃດກໍ່ຕາມ ທາງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ຂອງພວກເຮົາ ກໍ່ໄດ້ໃຊ້ຄວາມພະຍາຍາມຢ່າງສູງ ເພື່ອໃຫ້ ສຸວັນນີ ໂຮມເຊັນເຕີ ສາຂາ ທ່າແຂກ ເປີດໃຫ້ທັນຕາມກຳນົດການ ແລະ ກ່ອນການແຜ່ລະບາດ ຂອງເຊື້ອພະຍາດໂຄວິດ-19 ຈະມາຮອດ ສ ປປ ລາວ ໂດຍທາງ ຄະນະບໍລິຫານ ຂອງ ບໍລິສັດ ໄດ້ກຳນົດເອົາວັນທີ 2 ມີນາ 2020 ເປັນມື້ເປີດສາຂາ ທ່າແຂກ ສາຂາທີ 6 ຢ່າງເປັນທາງການ ຢູ່ທີ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ ໂດຍມີເນື້ອທີ່ສູນວາງສະແດງ ແລະ ສາງເກັບສິນຄ້າທັງໝົດ 10,000 ຕາແມັດ ພ້ອມມີພື້ນທີ່ ສຳລັບຈອດລົດຫຼາຍກ່ວາ 100 ຄັນ ເຊິ່ງໄດ້ຮັບການຕອບຮັບຈາກລູກຄ້າເປັນຢ່າງດີ.

## ✓ ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ ປີ2020

### ➢ ທີ່ຕັ້ງ ແລະ ເຄືອຂ່າຍ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ເຊິ່ງໃນປັດຈຸບັນປະກອບມີ 6 ສາຂາ ໃນນັ້ນຢູ່ນະຄອນຫຼວງວຽງຈັນມີ 3 ສາຂາ ແລະ ອີກ 3 ສາຂາ ຢູ່ຕ່າງແຂວງ ໄດ້ແກ່:

1. ສາຂາໂພນຕ້ອງ ຕັ້ງຢູ່: ເລກທີ 366, ຖະໜົນໂພນຕ້ອງ, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ,
2. ສາຂາສາຂາສີໄຄ ຕັ້ງຢູ່: ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ,
3. ສາຂາໂຊກໃຫຍ່ ຕັ້ງຢູ່: ຖະໜົນ 450, ບ້ານ ໂຊກໃຫຍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
4. ສາຂາ ປາກຊັນ ຕັ້ງຢູ່: ຖະໜົນເລກທີ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ.
5. ສາຂາ ປາກເຊ ຕັ້ງຢູ່: ຖະໜົນເລກທີ 38, ບ້ານ ກາງ, ນະຄອນປາກເຊ, ແຂວງ ຈຳປາສັກ.
6. ສາຂາ ທ່າແຂກ ຕັ້ງຢູ່: ຖະໜົນ 13 ເໜືອ, ບ້ານ ໂພນພິມ, ເມືອງ ທ່າແຂກ ແຂວງ ຄຳມ່ວນ

➢ **ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.**

- ເບີໂທ: (+856-21) 415645
- ແຟັກ: (+856-21) 262984
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la

✓ **ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2020**

➢ **ທຶນຈົດທະບຽນ**

ບໍລິສັດມີທຶນຈົດທະບຽນທັງໝົດ ນະວັນທີ 31 ທັນວາ 2020 ແມ່ນ 330.000.000.000 ກີບ ເປັນຮຸ້ນສາມັນຈຳນວນ 165.000.000 ຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ.

➢ **ຜູ້ຖືຮຸ້ນ**

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງບໍລິສັດ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ໄດ້ແກ່:

1. ຄອບຄົວສຸຄະບັນດິດ ຈຳນວນຮຸ້ນທີ່ຖືຄອງແມ່ນ 82.213.600 ຮຸ້ນ.
2. ບໍລິສັດ ໂກບອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 56.000.000 ຮຸ້ນ

✓ **ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ/** Organization Structure of Board of Directors, Managing Directors and the Activities of the Board.

➢ **ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ/Organization Chart of the Company**



## ➢ ຄະນະສະພາບໍລິຫານຂອງ ບໍລິສັດ ສູວັນນີ ໂຮມເຊັນເຕີ ມະຫາຊົນ

## Board of Directors of SVN 2020



ທ່ານ ອຸ່ນ ຫຼ້າສຸກັນ

Mr. Ounh LASOUKANH

ປະທານສະພາບໍລິຫານ

Chairman of board



ທ່ານ ອານຸສອນ ອຸ່ນໄຕ

Mr. Anousone OUNTAY

ຮອງປະທານສະພາບໍລິຫານ

Vice Chairman of board



ທ່ານ ວັດດານາ ສຸຄະບັນດິດ

Mr. Waddana SOUKHABANDITH

ສະມາຊິກສະພາບໍລິຫານ

Member of board



ທ່ານ ບຸນເຕີມ ກົມມິດຕະພາບ

Mr.  Bounterm KOMMITTAPHAP

ສະມາຊິກສະພາບໍລິຫານ

Member of board



ທ່ານ ພັນໂນລາ ສຸຄະບັນດິດ

Mr. Phannola SOUKHABANDITH

ສະມາຊິກສະພາບໍລິຫານ

Member of board



**ທ່ານ ກົດສະດາ ສຸຄະບັນດິດ**

Mr. Kotsada SOUKHABANDITH

ສະມາຊິກສະພາບໍລິຫານ

Member of board



**ທ່ານ ປອ ໄຊພອນ ກອງມະນີລາ**

Mr. Xayphone KONGMANILA,Ph.D

ສະມາຊິກສະພາບໍລິຫານ

Member of board



ທ່ານ ນາງ ຊຸຕິການ ສີແສງຈັນ

Ms. Chutikan SRISAENGCHAN

ສະມາຊິກສະພາບໍລິຫານ

Member of board



ທ່ານ ພິພົບ ວາດສະໜາອາຊາສະກຸນ

Mr. Piphop VASANAARCHASAKUL

ສະມາຊິກສະພາບໍລິຫານ

Member of board

## ➢ ຄະນະຜູ້ອໍານວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊັບ.

**Executive committee of Company 2020**



**ທ່ານ ພັນໂນລາ ສຸຄະບັນດິດ**
Mr. Phannola SOUKHABANDITH
ຮອງຜູ້ອໍານວຍການໃຫຍ່/
ຜູ້ອໍານວຍການໃຫຍ່ຝ່າຍການເງິນ.
Vice Chairman/CFO



**ທ່ານ ວັດດານາ ສຸຄະບັນດິດ**
Mr. Waddana SOUKHABANDITH
ຜູ້ອໍານວຍການໃຫຍ່
Chief Executive Officer/CEO



**ທ່ານ ກົດສະດາ ສຸຄະບັນດິດ**
Mr. Kotsada SOUKHABANDITH
ຮອງຜູ້ອໍານວຍການໃຫຍ່
ຜູ້ອໍານວຍການໃຫຍ່ຝ່າຍປະຕິບັດການ.
Vice Chairman/COO

## ➢ ການເຄື່ອນໄຫວ ຂອງສະພາບໍລິຫານ ໃນປີ 2020

- **ໃນປີ 2020 ສະພາບໍລິຫານ ໄດ້ມີການຈັດກອງປະຊຸມສະພາບໍລິຫານຈໍານວນ 04 ຄັ້ງ ຄື:**

- **ຄັ້ງທີ 01 ປະຈໍາປີ2020** ຈັດຂຶ້ນໃນວັນທີ 17 ກຸມພາ 2020 ເພື່ອພິຈາລະນາບັນຫາສໍາຄັນເຊັ່ນ: ພິຈາລະນາຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ, ຈາລະນາບົດລາຍງານຜົນການດໍາເນີນທຸລະກິດ ຂອງບໍລິສັດ ປະຈໍາປີ2019 ແລະ ຮ່າງບົດລາຍງານການເງິນ ຂອງບໍລິສັດ ປະຈໍາປີ2019, ພິຈາລະນາແຜນການດໍາເນີນທຸລະກິດ ຂອງບໍລິສັດ ປະຈໍາປີ2020, ພິຈາລະນາການຈ່າຍເງິນປັນຜົນຈາກຜົນການດໍາເນີນທຸລະກິດ ຂອງບໍລິສັດ ປະຈໍາປີ2019, ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກໍານົດຄ່າບໍລິການກວດສອບບັນຊີພາຍນອກ ປະຈໍາປີ2020, ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ, ພິຈາລະນາການແຕ່ງຕັ້ງຮອງປະທານສະພາບໍລິຫານແທນ ຮອງປະທານສະພາບໍລິຫານຜູ້ເກົ່າ ທີ່ລາອອກໄປ, ພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ , ພິຈາລະນາ ແລະ ຂໍອະນຸມັດໃນການຂໍກູ້ຢືມເງິນຈາກທະນາຄານ ແລະ ສະຖາບັນການເງິນທັງພາຍໃນ ແລະ ຕ່າງປະເທດ ເພື່ອມາໃຊ້ເປັນທຶນໝູນວຽນ ຂອງບໍລິສັດ, ພິຈາລະນາຮ່າງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ2019, ພິຈາລະນາ ແລະ ກໍານົດມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ແລະ ພິຈາລະນາ ອະນຸມັດໃຫ້ແຕ່ງຕັ້ງຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.
- **ຄັ້ງທີ 02 ປະຈໍາປີ 2020** ຈັດຂຶ້ນໃນວັນທີ 13 ພຶດສະພາ 2020 ເພື່ອພິຈາລະນາບັນຫາສໍາຄັນເຊັ່ນ: ພິຈາລະນາຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ, ພິຈາລະນາບົດລາຍງານຜົນການດໍາເນີນທຸລະກິດ

ຂອງບໍລິສັດ ປະຈຳໄຕມາດ 1/2020 ແລະ ຮ່າງບົດລາຍງານການເງິນ ຂອງບໍລິສັດ ປະຈຳໄຕມາດ 1/2020, ພິຈາລະນາແຕ່ງຕັ້ງປະທານຄະນະກຳມະການກວດສອບແທນຄົນເກົ່າທີ່ລາອອກໄປ.

- **ຄັ້ງທີ 03 ປະຈຳປີ 2020** ຈັດຂຶ້ນໃນວັນທີ 17 ສິງຫາ 2020 ເພື່ອພິຈາລະນາບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ, ພິຈາລະນາບົດລາຍງານ ຜົນການດຳເນີນທຸລະກິດຂອງບໍລິສັດປະຈຳ 6 ເດືອນຕົ້ນປີ 2020 ແລະ ຮ່າງບົດລາຍງານການເງິນຂອງບໍລິສັດ ປະຈຳ 6 ເດືອນຕົ້ນປີ 2020, ພິຈາລະນາແຜນການດຳເນີນທຸລະກິດ ຂອງບໍລິສັດປະຈຳ 6 ເດືອນທ້າຍປີ 2020.
- **ຄັ້ງທີ 04 ປະຈຳປີ 2020** ຈັດຂຶ້ນໃນວັນທີ 10 ພະຈິກ 2020 ເພື່ອພິຈາລະນາບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ; ພິຈາລະນາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳໄຕມາດ 3 ປີ 2020 ແລະ ຮ່າງບົດລາຍງານການເງິນ ຂອງບໍລິສັດ ປະຈຳໄຕມາດ 3 ປີ 2020.

- **ໃນປີ 2020 ຄະນະກຳມະການກວດສອບ ໄດ້ມີການຈັດກອງປະຊຸມ ຈຳນວນ 4 ຄັ້ງ ຄື:**

- **ຄັ້ງທີ 01 ປະຈຳປີ 2020** ຈັດຂຶ້ນໃນວັນທີ 10 ກຸມພາ 2020 ເພື່ອປຶກສາຫາລື ກ່ຽວກັບ ບົດລາຍງານການເງິນປະຈຳປີ2019 ຂອງບໍລິສັດ.
- **ຄັ້ງທີ 02 ປະຈຳປີ 2020** ຈັດຂຶ້ນໃນວັນທີ 11 ພຶດສະພາ 2020 ເພື່ອປຶກສາຫາລືກ່ຽວກັບບົດລາຍງານການເງິນ 3 ເດືອນ ຂອງປີ 2020.
- **ຄັ້ງທີ 03 ປະຈຳປີ 2020** ຈັດຂຶ້ນໃນວັນທີ 13 ສິງຫາ 2020 ເພື່ອປຶກສາຫາລື ກ່ຽວກັບ ບົດລາຍງານການເງິນ 6 ເດືອນ ຂອງປີ 2020.
- **ຄັ້ງທີ 04 ປະຈຳປີ 2020** ຈັດຂຶ້ນໃນວັນທີ 5 ພະຈິກ 2020 ເພື່ອປຶກສາຫາລືກ່ຽວກັບບົດລາຍງານການເງິນ 9 ເດືອນ ຂອງປີ 2020.

- **ໃນປີ 2020 ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ ຄື:**

- **ຄັ້ງທີ 01 ປະຈຳປີ 2020** ຈັດຂຶ້ນໃນວັນທີ 10 ພະຈິກ 2020 ເພື່ອປຶກສາຫາລື ກ່ຽວກັບ ຜົນຕອບແທນເງິນກະສຽນອາຍຸ ຂອງພະນັກງານ.
- **ຄັ້ງທີ 02 ປະຈຳປີ 2020** ຈັດຂຶ້ນໃນວັນທີ 22 ທັນວາ 2020 ເພື່ອປຶກສາຫາລື ກ່ຽວກັບ ຫລັກການຜົນຕອບແທນ ຂອງພະນັກງານ ທີ່ມີຕຳແໜ່ງຕ່ຳກວ່າ COO, CFO, CEO ລົງມາ; ພິຈາລະນາ ແລະ ຮັບຮອງ ຫລັກການຜົນຕອບແທນ ຂອງຜູ້ບໍລິຫານໃນລະດັບ COO, CFO, CEO; ຫລັກການຜົນຕອບແທນ ຂອງຄະນະກຳມະການກວດສອບ, ຄະນະກຳມະການກຳນົດຄ່າຕອບແທນ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ; ຫລັກການຜົນຕອບແທນຂອງ ປະທານສະມາຊິກສະພາບໍລິຫານ, ຮອງປະ ທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ສະມາຊິກສະພາບໍລິຫານອິດສະຫລະ.

- **ໃນປີ 2020 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ ຄື:**

**- ຄັ້ງທີ 01 ປະຈຳປີ 2020** ຈັດຂຶ້ນໃນວັນທີ 10 ພະຈິກ 2020 ເພື່ອປຶກສາຫາລື ກ່ຽວກັບ ປັດໃຈຄວາມສ່ຽງ ແລະ ການບໍລິຫານຄວາມສ່ຽງ ດ້ານການເງິນຂອງບໍລິສັດ ປະຈຳປີ 2020.

- ຄັ້ງທີ 02 ປະຈຳປີ 2020 ຈັດຂຶ້ນໃນວັນທີ 22 ທັນວາ 2020 ເພື່ອປຶກສາຫາລື ກ່ຽວກັບ ປັດໃຈຄວາມສ່ຽງ ແລະ ການບໍລິຫານຄວາມສ່ຽງ ດ້ານອັກຄີໄພ ແລະ ໄພທຳມະຊາດ; ປັດໃຈຄວາມສ່ຽງ ແລະ ການບໍລິຫານຄວາມສ່ຽງ ດ້ານພະຍາດລະບາດ COVID 19

- **ໃນປີ 2020 ຄະນະກຳມະການຄັດເລືອກ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ ຄື:**

**- ຄັ້ງທີ 01 ປະຈຳປີ 2020** ຈັດຂຶ້ນໃນວັນທີ 10 ພະຈິກ 2020 ເພື່ອປຶກສາຫາລື ກ່ຽວກັບ ຫລັກການ ແລະ ຂັ້ນຕອນການຄັດເລືອກບຸກຄະລາກອນຂອງບໍລິສັດ

**- ຄັ້ງທີ 02 ປະຈຳປີ 2020** ຈັດຂຶ້ນໃນວັນທີ 22 ທັນວາ 2020 ເພື່ອປຶກສາຫາລື ກ່ຽວກັບ ເງື່ອນໄຂການຄັດເລືອກພະນັກງານໃນລະດັບທົ່ວໄປທຸກຕຳແໜ່ງ; ການຄັດເລືອກພະນັກງານ ເພື່ອເລື່ອນຕຳແໜ່ງ ທີ່ສູງຂຶ້ນ; ການຄັດເລືອກພະນັກງານຈາກພາຍນອກມາເປັນທີ່ປຶກສາ.

- **ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.**

ສຳລັບສະມາຊິກສະພາບໍລິຫານສະເພາະທີ່ເປັນສະມາຊິກອິດສະຫຼະ ຈະມີຄ່າຕອບແທນເປັນເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງໂດຍແບ່ງອອກຄື

- ປະທານສະພາບໍລິຫານ: 3,000,000ກີບ/ຄັ້ງ
- ຮອງປະທານສະພາບໍລິຫານ: 2,000,000ກີບ/ຄັ້ງ
- ສະມາຊິກສະພາບໍລິຫານ: 2,000,000ກີບ/ຄັ້ງ

✓ **ບົດລາຍງານດ້ານການເງິນ ຂອງບໍລິສັດ ປະຈຳປີ 2020**

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານຖານະການເງິນ**
**ວັນທີ 31 ທັນວາ 2020**

| | ບົດ ອະທິບາຍ | 2020 ກີບ | 2019 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 6 | 3.734.536.186 | 3.740.207.940 |
| ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | 7 | 11.221.223.619 | 16.223.470.257 |
| ເຄື່ອງໃນສາງ, ສຸດທິ | 8 | 244.475.544.506 | 207.366.001.254 |
| ຊັບສິນໝູນວຽນອື່ນໆ | 9 | 7.373.681.890 | 8.129.892.874 |
| ລວມຊັບສິນໝູນວຽນ | | 266.804.986.201 | 235.459.572.325 |
| **ຊັບສິນບໍ່ໝູນວຽນ** | | | |
| ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ | 10 | 603.046.157.185 | 550.085.847.112 |
| ຊັບສິນຄົງທີ່ທີ່ບໍ່ມີຕົວຕົນ, ສຸດທິ | 11 | 38.975.565 | 69.553.646 |
| ລວມຊັບສິນບໍ່ໝູນວຽນ | | 603.085.132.750 | 550.155.400.758 |
| **ລວມຊັບສິນ** | | **869.890.118.951** | **785.614.973.083** |

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2021

ພົນໄບລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2021

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 13 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານຖານະການເງິນ**
**ວັນທີ 31 ທັນວາ 2020**

| | ບົດ ອະທິບາຍ | 2020 ກີບ | 2019 ກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນຕົນເອງ** | | | |
| **ໜີ້ສິນໝູນວຽນ** | | | |
| ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | 13 | 85.933.290.928 | 70.121.900.273 |
| ບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 12 | 43.605.028.476 | 44.470.100.376 |
| ສ່ວນໝູນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ | 13 | 9.068.667.781 | 8.240.787.500 |
| ອາກອນກຳໄລ | 14 | 740.792.797 | 324.820.091 |
| ເງິນມັດຈຳຈາກລູກຄ້າ | 15 | 1.130.450.932 | 880.894.353 |
| ໜີ້ສິນໝູນວຽນອື່ນໆ | 16 | 16.545.347.976 | 18.246.895.277 |
| ລວມໜີ້ສິນໝູນວຽນ | | 157.023.578.890 | 142.285.397.870 |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ | 13 | 8.998.418.768 | 16.322.691.340 |
| ລວມໜີ້ສິນບໍ່ໝູນວຽນ | | 8.998.418.768 | 16.322.691.340 |
| **ລວມໜີ້ສິນ** | | 166.021.997.658 | 158.608.089.210 |
| **ທຶນ** | | | |
| ທຶນຈົດທະບຽນ | | | |
| ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ | | | |
| ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ | 17 | 330.000.000.000 | 330.000.000.000 |
| ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ | | | |
| ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ | | 330.000.000.000 | 330.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | | 24.735.724.722 | 24.735.724.722 |
| ກຳໄລສະສົມ | | | |
| ເງິນສຳຮອງຕາມກົດໝາຍ | 18 | 5.973.926.973 | 4.772.981.235 |
| ເງິນສຳຮອງອື່ນໆ | 18 | 5.723.926.973 | 4.522.981.235 |
| ກຳໄລທີ່ຍັງບໍ່ແບ່ງປັນ | | 164.542.719.132 | 157.575.153.226 |
| ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | 172.891.823.493 | 105.400.043.455 |
| ລວມທຶນ | | 703.868.121.293 | 627.006.883.873 |
| **ລວມໜີ້ສິນ ແລະ ທຶນ** | | **869.890.118.951** | **785.614.973.083** |

ວັດທະນາ ສຸດທະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2021

ພັນໄນລາ ສຸດທະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2021

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 13 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານຜົນໄດ້ຮັບ**
**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020**

| | ບົດ ອະທິບາຍ | 2020 ກີບ | 2019 ກີບ |
|---|---|---|---|
| ລາຍໄດ້ຈາກການຂາຍ | | 396.712.890.643 | 384.272.694.949 |
| ລາຍໄດ້ຈາກການບໍລິການ | | - | 1.370.635.998 |
| ຕົ້ນທຶນໃນການຂາຍ | 19 | (326.144.236.331) | (330.877.154.753) |
| ຕົ້ນທຶນໃນການບໍລິການ | | - | (749.416.242) |
| **ກຳໄລລວມຂັ້ນຕົ້ນ** | | **70.568.654.312** | **54.016.759.952** |
| ລາຍຮັບອື່ນໆ | | 2.112.328.028 | 15.137.736.762 |
| ລາຍຈ່າຍໃນການຂາຍ | 19 | (31.813.074.596) | (30.829.541.798) |
| ລາຍຈ່າຍບໍລິຫານ | 19 | (28.552.983.777) | (27.533.139.575) |
| ລາຍຈ່າຍການເງິນ | | (4.684.273.425) | (5.369.603.263) |
| ກຳໄລຈາກອັດຕາແລກປ່ຽນ, ສຸດທິ | | 5.076.201.776 | 6.113.412.520 |
| **ກຳໄລ ກ່ອນຈ່າຍອາກອນກຳໄລ** | | **12.706.852.318** | **11.535.624.598** |
| ອາກອນກຳໄລ | 20 | (697.394.936) | (326.085.700) |
| **ກຳໄລສຸດທິໃນປີ** | | **12.009.457.382** | **11.209.538.898** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | | 73 | 68 |

ວັດທະນາ ສຸດທະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2021

ພັນໄບລາ ສຸດທະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2021

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 13 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

**ໃບລາຍງານສ່ວນປ່ຽນແປງທຶນ**
**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020**

| | ບົດອະທິບາຍ | ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ | ສ່ວນເພີ່ມມູນຄ່າຮຸ້ນ | ສຳຮອງເງິນຕາມກົດໝາຍ | ສຳຮອງເງິນອື່ນໆ | ກຳໄລສະສົມ ຍັງບໍ່ແບ່ງປັນ | ຜົນຕ່າງຈາກການແປງ ຄ່າເອກະສານລາຍງານການເງິນ | ລວມ |
|---|---|---|---|---|---|---|---|---|
| | | ກີບ | ກີບ | ກີບ | ກີບ | ກີບ | ກີບ | ກີບ |
| **ຍອດຍົກມາ ວັນທີ 1 ມັງກອນ 2019** | | 330.000.000.000 | 24.735.724.722 | 3.652.027.345 | 3.402.027.345 | 149.927.522.108 | 36.483.376.882,00 | 548.200.678.402 |
| ສຳຮອງເງິນຕາມກົດໝາຍ | | - | - | 1.120.953.890 | - | (1.120.953.890) | - | - |
| ສຳຮອງເງິນອື່ນໆ | | - | - | - | 1.120.953.890 | (1.120.953.890) | - | - |
| ກຳໄລສຸດທິໃນປີ | | - | - | - | - | 11.209.538.898 | - | 11.209.538.898 |
| ຈ່າຍເງິນປັນຜົນ | 21 | - | - | - | - | (1.320.000.000) | - | (1.320.000.000) |
| ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 68.916.666.573 | 68.916.666.573 |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | | 330.000.000.000 | 24.735.724.722 | 4.772.981.235 | 4.522.981.235 | 157.575.153.226 | 105.400.043.455 | 627.006.883.873 |
| **ຍອດຍົກມາ ວັນທີ 1 ມັງກອນ 2020** | | 330.000.000.000 | 24.735.724.722 | 4.772.981.235 | 4.522.981.235 | 157.575.153.226 | 105.400.043.455,00 | 627.006.883.873 |
| ສຳຮອງເງິນຕາມກົດໝາຍ | | - | - | 1.200.945.738 | - | (1.200.945.738) | - | - |
| ສຳຮອງເງິນອື່ນໆ | | - | - | - | 1.200.945.738 | (1.200.945.738) | - | - |
| ກຳໄລສຸດທິໃນປີ | | - | - | - | - | 12.009.457.382 | - | 12.009.457.382 |
| ຈ່າຍເງິນປັນຜົນ | 21 | - | - | - | - | (2.640.000.000) | - | (2.640.000.000) |
| ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 67.491.780.038 | 67.491.780.038 |
| **ຍອດເຫຼືອໃນວັນທີ 31 ທັນວາ 2020** | | 330.000.000.000 | 24.735.724.722 | 5.973.926.973 | 5.723.926.973 | 164.542.719.132 | 172.891.823.493 | 703.868.121.293 |

ວັດທະນາ ສຸລະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2021

ທັບໄມລາ ສຸລະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2021

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 13 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານກະແສເງິນສົດ**
**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020**

| | ບົດ ອະທິບາຍ | 2020 ກີບ | 2019 ກີບ |
|---|---|---|---|
| **ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ | | 12.706.852.318 | 11.535.624.598 |
| ການດັດແກ້: | | | |
| ຄ່າຫຼຸ້ຍຫ້ຽນ | 10 | 16.947.511.588 | 14.170.930.520 |
| ການຕັດຈ່າຍ | 11 | 43.159.625 | 98.569.624 |
| ກຳໄລຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ | | (11.657.267) | 181.668.387 |
| ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ | | (3.545.406.395) | 2.439.777.229 |
| ລາຍຈ່າຍດອກເບ້ຍ | | 4.684.286.868 | 5.369.603.263 |
| ສຳຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ (ກັບລາຍການ) | | 39.528.134 | 427.345.393 |
| ສຳຮອງເງິນແຮໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ (ກັບລາຍການ) | | 374.657.127 | (169.773.658) |
| ສຳຮອງສຳລັບສິ່ງກີບການຂາຍຂອງໜີ້ຕ້ອງຮັບ | | 102.605.704 | 680.721.442 |
| ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງເງິນທຶນໝູນວຽນ | | 31.341.537.702 | 34.734.466.798 |
| ການປ່ຽນແປງຈາກ ການດຳເນີນງານຂອງເງິນທຶນໝູນວຽນ | | | |
| - ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | 6.258.775.324 | 990.778.325 |
| - ເຄື່ອງໃນສາງ | | (14.988.004.227) | 8.769.428.219 |
| - ຊັບສິນໝູນວຽນອື່ນໆ | | 1.625.047.249 | (1.617.948.922) |
| - ຊັບສິນບໍ່ໝູນວຽນອື່ນໆ | | - | 1.762.321.786 |
| - ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | (6.172.300.403) | (6.777.273.248) |
| - ເງິນມັດຈຳຈາກລູກຄ້າ | | 155.415.983 | (28.214.274.512) |
| - ໜີ້ສິນໝູນວຽນອື່ນໆ | | (3.692.671.662) | 6.624.439.973 |
| ກະແສເງິນສົດໃຊ້ສຳລັບການດຳເນີນງານ | | 14.527.799.966 | 16.271.938.419 |
| ຈ່າຍດອກເບ້ຍ | | (4.643.196.115) | (5.369.603.263) |
| ຈ່າຍອາກອນກຳໄລ | 20 | (325.885.700) | (1.300.000) |
| ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳ ການດຳເນີນງານ | | 9.558.718.151 | 10.901.035.156 |
| **ກະແສເງິນສົດ ຈາກກິດຈະກຳ ການລົງທຶນ** | | | |
| ຊື້ຊັບສົມບັດຄົງທີ່ | 10 | (11.051.303.440) | (12.086.507.778) |
| ຊື້ຊັບສິນບໍ່ມີຕົວຕົນ | | (7.960.427) | - |
| ລາຍຮັບຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ | | 140.789.700 | 101.413.568 |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ | | (10.918.474.167) | (11.985.094.210) |

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2021

ພົນໄລລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2021

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 13 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

**ບໍລິສັດ ຊູວັນນີ ໂຮມເຊັນເຕີ ມະຫາຊົນ**

**ໃບລາຍງານກະແສເງິນສົດ**
**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020**

| | ບົດ ອະທິບາຍ | 2020 ກີບ | 2019 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການເງິນ** | | | |
| ລາຍຮັບຈາກ ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | | 373.688.462.850 | 104.268.805.265 |
| ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ | | (374.492.428.216) | (106.978.792.266) |
| ຈ່າຍເງິນປັນຜົນ | 20 | (2.640.000.000) | (1.320.000.000) |
| ເງິນສົດສຸດທິຈາກກິດຈະກຳທາງການເງິນ | | (3.443.965.366) | (4.029.987.001) |
| **ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | (4.803.721.382) | (5.114.046.055) |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ | 6 | 3.740.207.940 | 8.873.646.944 |
| ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 4.798.049.628 | (19.392.949) |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍປີ** | | **3.734.536.186** | **3.740.207.940** |
| **ລາຍການບໍ່ແມ່ນເງິນສົດ** | | | |
| ໜີ້ຕ້ອງສົ່ງອື່ນໆ ຈາກການຊື້ຊັບສິນຄົງທີ່ | | 554.738.341 | 1.698.948.553 |
| ໜີ້ຕ້ອງສົ່ງດອກເບ້ຍ | | (41.090.752) | - |

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2021

ພັນໄນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2021

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 13 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

✓ **ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ໃນປີ 2020**

ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສະເພາະປະຈຳປີ 2020 ໂດຍມີຄ່າບໍລິການເປັນເງິນຈຳນວນເງິນ **37,500** ໂດລາສະຫະລັດ.

## ✓ ຄວາມຮັບຜິດຊອບຕໍ່ສັງຄົມ ປີ 2020

➢ **ການມອບພັນທະອາກອນ ປີ 2020**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ, ອາກອນກຳໄລ ເປັນຕົ້ນ.

**ການມອບພັນທະອາກອນໃຫ້ລັດ ປະຈຳປີ 2020**

| ລຳດັບ | ລາຍການ | ລວມມູນຄ່າ (ກີບ) |
|---|---|---|
| | | |
| 1 | ພາສີນຳເຂົ້າ | 2.730.672.956 |
| 2 | ອາກອນມູນຄ່າເພີ່ມ | 39.849.822.956 |
| 3 | ອາກອນຊົມໃຊ້ | 4.603.800 |
| 4 | ອາກອນເງິນເດືອນ | 790.815.315 |
| 5 | ອາກອນກຳໄລ | 697.394.936 |
| | ລວມ | **44.073.309.963** |

➢ **ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ 2020**

ໃນປີ 2020 ທີ່ຜ່ານມາ, ທາງບໍລິສັດຍັງສືບຕໍ່ ສ້າງສີສັນ ແລະ ຄວາມສຸກສູ່ສັງຄົມ ໂດຍຜ່ານໂຄງການ: **ສ້າງຮອຍຍິ້ມດ້ວຍການແບ່ງປັນ**" ຜ່ານກິດຈະກຳຍ່ອຍຕ່າງໆ ຫຼາຍກ່ວາ 41 ໂຄງການ ໂດຍແບ່ງອອກເປັນໝວດດັ່ງນີ້:

- **ການຊ່ວຍເຫຼືອດ້ານການສຶກສາ, ກິລາ ແລະ ສິນລະປະ ປີ 2020**
  - ຖວາຍ "ສີ" Dulux ທາພາຍນອກ ຈຳນວນ 20 ຖັງ ໃຫ້ ວັດນາຄູນນ້ອຍ ເພື່ອນຳໄປທາສີໂຮງຮຽນ ມັດທະຍົມຕອນຕົ້ນສົງ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ມູນຄ່າ: 14,080,000ກີບ.
  - ມອບອຸປະກອນການຮຽນ-ການສອນໃຫ້ໂຮງຮຽນປະຖົມ ບ້ານ ນ້ຳຝົດ ແລະ ໂຮງຮຽນປະຖົມບ້ານ ນາສັງທອງ, ເມືອງ ກາສີ, ແຂວງ ວຽງຈັນ ມູນຄ່າ: 12,851,000 ກີບ:

- ມອບກະໂລ ຂະໜາດ 30x30 ຈານວນ 264ກ່ອງ ໃຫ້ໂຮງຮຽນປະຖົມສົມບູນ ບ້ານ ອີ່ໄລ ມູນຄ່າ: 10,300,000 ກີບ.
- ມອບອຸປະກອນປະເພດ ສັງກະສີ, ຕະປູ, ຫຼີບຫຼັງຄາ ໃຫ້ໂຮງຮຽນ ມັດທະຍົມ ສົມສະໄໝ ມູນຄ່າ: 8,141,536 ກີບ.
- ສະໜັບສະໜູນ ງານ Startup Challenge ເພື່ອສົ່ງເສີມຫົວຄິດປະດິດສ້າງ ແລະ ການລິເລີ່ມເຮັດທຸລະກິດ ຂອງໄວໜຸ່ມໃຫ້ແກ່ ສະຖາບັນ ທຸລະກິດ ແສງສະຫວັນ ມູນຄ່າ: 3,800,000 ກີບ
- ມອບ "ສີ" Dulux ທາພາຍນອກ ຂະໜາດ 9L ຈຳນວນ 10 ຖັງ ໃຫ້ມູນນິທິຊ່ວຍເຫຼືອຄົນທຸກຍາກແຫ່ງ ສປປ ລາວ 1623 ເພື່ອຈະນຳໄປທາ ໃຫ້ໂຮງຮຽນ ປະຖົມສົມບູນ ທ່ານາກ ແລະ ໂຮງຮຽນ ປະຖົມສົມບູນ ອຸດົມພົນ ຫຼັກ21 ມູນຄ່າ: 3,200,000 ກີບ



ໂຮງຮຽນປະຖົມ ບ້ານ ນ້ຳຝົດ ແລະ ໂຮງຮຽນປະຖົມບ້ານ ນາສັງທອງ, ເມືອງ ກາສີ, ແຂວງ ວຽງຈັນ

- **ການຊ່ວຍເຫຼືອດ້ານສຸຂະພາບ ປີ2020**
  - ບໍລິຈາກເລືອດ ເພື່ອສັງຄົມ ຈຳນວນ 2ຄັ້ງ ລວມຍອດບໍລິຈາກ 161 ຖົງ ໃນປີ 2020 ທີ່ຜ່ານມາ



  - ປະກອບສ່ວນມອບເງິນຊ່ວຍຕ້ານ ແລະ ຄວບຄຸມເຊື້ອພະຍາດໂຄວິດ-19 ໃຫ້ແກ່ ຄະນະສະເພາະກິດ ເພື່ອປ້ອງກັນ ແລະ ຄວບຄຸມແກ້ໄຂພະຍາດອັກເສບປອດ ມູນຄ່າ: 100,000,000 ກີບ.
  - ມອບຜ້າອັດປາກ ແລະ ເຈວລ້າງມືໃຫ້ ວິທະຍາໄລ ແພດສາດ ເພື່ອປ້ອງພະຍາດໂຄວິດ-19 ມູນຄ່າ: 6,200,000ກີບ






- **ການຊ່ວຍເຫຼືອດ້ານວັດທະນະທຳ ແລະ ສາດສະໜາ ປີ2020**
  - ບໍລິຈາກປ້ຳນ້ຳດູດບາດານ ໃຫ້ວັດປ່ານາຄູນນ້ອຍ ຈຳນວນ 1 ໜ່ວຍ ບ້ານ ນາຄູນ ນ້ອຍ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ
  - ມອບເງິນສະໜັບສະໜູນ ງານແຂ່ງຂັນສຽງແຄນເຊື້ອຊາດລາວ ກັບຮຸ່ນສືບທອດໃນ 9 ຕົວເມືອງ ທົ່ວນະຄອນຫຼວງ ເພື່ອສະເຫຼີມສະຫຼອງວັນຄ້າຍວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 100 ປີ ຈັດງານ ວັນທີ 22/11/2020
  - ມອບເງິນສະໜັບສະໜູນ ງານບຸນປະເພນີ ປີໃໝ່ເຜົ່າມົ້ງ ທີ່ສວນພຶກສາ ບ້ານ ດານຊີ ເມືອງ ນາຊາຍທອງ ນະຄອນຫຼວງວຽງຈັນ ເພື່ອສືບສານ ວັດທະນະທຳອັນດີງາມ ຂອງລາວ





- **ການຊ່ວຍເຫຼືອດ້ານອຸປະກອນ ປີ 2020**
  - ມອບກະໂລ ຂະໜາດ 60x60 ຊມ ຈຳນວນ 95 ກ່ອງ ແລະ ປູນກາວ ຈຳນວນ 45 ຖົງ ໃຫ້ ຫ້ອງການ ບ້ານ ວຽງຈະເລີນ ເພື່ອປັບປຸງຫ້ອງການບ້ານໃໝ່ ມູນຄ່າ: 20,000,000 ກີບ.
  - ມອບຊັກໂຄກ 8 ໜ່ວຍ, ສີນ້ຳທາ 10 ຖັງ, ພັດລົມດູດອາກາດ 7ໜ່ວຍ, ລູກບິດປະຕູ 13 ອັນ, ແລະ ອຸປະກອນຕ່າງໆ ໃຫ້ ຫ້ອງການ ເມືອງສີສັດຕະນາກ ມູນຄ່າ: 12,200,000ກີບ
  - ສົມທົບທຶນຊື້ກະເບື້ອງມຸງຫຼັງຄາ ສ້າງທີ່ພັກຄົນຊະລາ ໂດຍຜ່ານ ມູນນິທິຊ່ວຍເຫຼືອຄົນທຸກຍາກແຫ່ງ ສປປ ລາວ 1623 ມູນຄ່າ: 10,500,000ກີບ.
  - ມອບກະໂລ ຂະໜາດ 60x60ຊມ ຈຳນວນ 45ແກັດໃຫ້ແກ່ ກອງບັນຊາການທະຫານ ເມືອງ ຈັນທະບູລີ ມູນຄ່າ: 9,000,000ກີບ.





- **ການຊ່ວຍເຫຼືອແບບອຸປະຖຳ ປີ2020**
  - ສະໜັບສະໜູນ ອວຍພອນວັນຊາດ ທີ 02 ທັນວາ 2020 ຄົບຮອບ 45 ປີ ໂທລະພາບແຫ່ງຊາດ
  - ສະໜັບສະໜູນ ບົດກອນອວຍພອນສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ ສາກົນ 2021 ແດ່ຜູ້ນຳພັກ-ລັດ ແລະ ປະຊາຊົນລາວ ຜ່ານໂທລະພາບແຫ່ງຊາດລາວ ແລະ ໂທລະພາບແຂວງຈຳປາສັກ.

## ✓ ນະໂຍບາຍການຄຸ້ມຄອງພາຍໃນ ປີ 2020.

ບໍລິສັດ ມີນະໂຍບາຍໃນການຄຸ້ມຄອງພາຍໃນໂດຍໃຊ້ມາດຕະຖານການບໍລິຫານຈັດການພາຍໃຕ້ລະບົບ ISO 9001 Version 2015 ແລະ ຍັງຄວບຄຸມດ້ວຍມາດຕະຖານຮ້ານແລະມາດຕະຖານການບໍລິການຕ່າງໆ ພ້ອມນີ້ກໍ່ມີການຄວບຄຸມໂດຍລະບົບຄອມພິວເຕີ ນຳໃຊ້ Software ທີ່ມີປະສິດທິພາບ ເພື່ອການຄຸ້ມຄອງ, ມີການຂໍອະນຸມັດຕາມຂັ້ນຕອນຂອງລະບົບ ພາຍໃຕ້ການກວດສອບຂອງທີມງານກວດສອບພາຍໃນແລະທີມງານກວດສອບພາຍນອກພ້ອມເສີມດ້ວຍລະບົບກ້ອງວົງຈອນປິດເພື່ອກວດກາຄວບຄຸມຈຸດບົກຜ່ອງຕ່າງໆ

## ✓ ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ 2020

ທຸລະກິດການຄ້າວັດສະດຸກໍ່ສ້າງໃນລາວມີປັດໃຈຄວາມສ່ຽງຫຼັກໃນປີຜ່ານມາຄື:

1. ພາລະໜີ້ສິນຂອງລູກຄ້າ
2. ອັດຕາແລກປ່ຽນ
3. ພາວະໂລກລະບາດ
4. ໄພຕ່າງໆ

ເຊິ່ງພວກເຮົາໄດ້ ບໍລິຫານຄວາມສ່ຽງຕ່າງໆ ໂດຍໃຊ້ກົນໄກການອະນຸມັດຕ່າງໆ ມີການພິຈາລະນາ ແລະ ກຳນົດວົງເງິນໃຫ້ບໍລິສັດ ແລະ ລູກຄ້າ, ທາງດ້ານອັດຕາແລກປ່ຽນແມ່ນ ເນື່ອງຈາກ ບໍລິສັດນຳເຂົ້າ ໂດຍຖືກຕ້ອງຕາມກົດໝາຍ ຈຶ່ງສາມາດຊື້ເງິນຕາຈາກທະນາຄານໄດ້, ດ້ວຍພາລະໂລກລະບາດ ແມ່ນມີມາດຕະການທາງລະບົບການຂາຍ online ແລະ ທາງ offline ແມ່ນມີມາດຕະຖານຮັກສາໄລຍະຫ່າງ ຂອງລູກຄ້າ ໃສ່ໜ້າກາກ, ວັດແທກອຸ່ນນະພູມ ແລະ ມີເຢວລ້າງມື ທຸກຄັ້ງກ່ອນ ແລະ ຫລັງບໍລິການ ແລະ ດ້ານໄພຕ່າງໆເຊັ່ນ: ນ້ຳຖ້ວມ, ໄຟໄໝ້, ພາຍຸ ແລະ ແຜ່ນດິນໄຫວເຫຼົ່ານີ້ເປັນຕົ້ນ ພວກເຮົາໄດ້ມີການຊື້ປະກັນໄພໄວ້ໃນແຕ່ລະສາຂາ ເພື່ອຮອງຮັບທຸກສະຖານະການ ທີ່ຈະເກີດຂຶ້ນ.

## ✓ ແຜນດໍາເນີນງານປະຈໍາປີ 2021

### ➢ ແຜນດ້ານວຽກງານການຂາຍ ແລະ ການເງິນໃນປີ 2021

ໃນປີ 2021 ບໍລິສັດຕັ້ງເປົ້າໝາຍຍອດຂາຍໃຫ້ເຕີບໂຕທີ 10% ເມື່ອທຽບກັບປີທີ່ຜ່ານມາ ທັງນີ້ຈາກການປະເມີນໃນເລື່ອງປັດໃຈສະພາບແວດລ້ອມທັງພາຍໃນ ແລະ ພາຍນອກທີ່ຍັງມີຄວາມບໍ່ແນ່ນອນສູງຈາກ ພາວະເສດຖະກິດໂລກ, ໂລກລະບາດ ແລະ ກໍາລັງສັ່ງຊື້ທີ່ລົດລົງ, ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວບໍລິສັດໄດ້ວາງແຜນປະຕິບັດດັ່ງນີ້:

- ພັດທະນາຊ່ອງທາງການຂາຍໃນແຕ່ລະຊ່ອງລະດັບກຸ່ມກໍາລັງຊື້ຂອງລູກຄ້າ ແລະ ເພີ່ມຄວາມຫລາກຫລາຍ ຂອງຊ່ອງທາງຂາຍ ລວມທັງການພັດທະນາຊ່ອງທາງການຂາຍທາງອອນລາຍ ແລະ ການບໍລິການຕິດຕັ້ງ ເພື່ອເພີ່ມຍອດຂາຍໃຫ້ບໍລິສັດ.
- ສັນຫາສິນຄ້າໃໝ່ ທີ່ມີຄຸນນະພາບມາຢ່າງຕໍ່ເນື່ອງ ສະໜອງໃຫ້ແຕ່ລະດັບກຸ່ມກໍາລັງຊື້ຂອງລູກຄ້າ ເພື່ອເພີ່ມຖານລູກຄ້າໃນແຕ່ລະກຸ່ມເປົ້າໝາຍ.
- ເພີ່ມຄວາມຫລາກຫລາຍຂອງສິນຄ້າ ທີ່ມີຊື່ສຽງໃນຕະຫລາດ ເພື່ອເພີ່ມມາດຕະຖານດ້ານຄຸນນະພາບ ແລະ ຄວາມເຊື່ອຖື.
- ເພີ່ມກໍາລັງການຊື້ສິນຄ້າ Private Brand, ໃຫ້ຫລາຍຂື້ນເພື່ອເພີ່ມສັກກະຍະພາບການຂາຍໃຫ້ສູງຂຶ້ນ.
- ຄວບຄຸມຄ່າໃຊ້ຈ່າຍ ໃຫ້ມີປະສິດຕິພາບສູງຂຶ້ນ

### ➢ ແຜນດ້ານວຽກງານການຕະຫຼາດ (ລູກຄ້າ) ໃນປີ 2021

ເພື່ອໃຫ້ບັນລຸເປົ້າໝາຍການຂະຫຍາຍໂຕດັ່ງກ່າວ ທັງເປັນການສ້າງພື້ນຖານໄລຍະຍາວ ພວກເຮົາໄດ້ມີການວາງແຜນການຕະຫລາດດັ່ງນີ້:

- ສ້າງຖານຂໍ້ມູນລູກຄ້າແຕ່ລະລະດັບແບບເລີກ ໃນແຕ່ລະດັບກຸ່ມກໍາລັງຊື້ ຂອງລູກຄ້າ ແລະ ສ້າງແຜນກິດຈະກໍາຮ່ວມກັບລູກຄ້າ ໂດຍສະເພາະລູກຄ້າທົ່ວໄປ, ຮ້ານຄ້າ, ບໍລິສັດກໍ່ສ້າງ ແລະ ຊ່າງຜູ້ຮັບເໝົາ.
- ຈັດທໍາແຜນໂປໂມຊັ່ນສິນຄ້າໄປສູ່ແຕ່ລະກຸ່ມລູກຄ້າເປົ້າໝາຍເພື່ອກະຕຸ້ນຍອດຂາຍ.
- ຈັດທໍາສື່ໂຄສະນາຜ່ານທາງ Online ແລະ Offline ເພື່ອສື່ສານການຕະຫລາດໄປສູ່ກຸ່ມລຸກຄ້າເປົ້າໝາຍໃນແຕ່ລະທ້ອງຖິ່ນ.
- ສົ່ງເສີມການຊ່ວຍເຫລືອສັງຄົມຜ່ານໂຄງການ "ສ້າງຮອຍຍິ້ມ ດ້ວຍການແບ່ງປັນ" ຊ່ວຍເຫລືອໂຮງຮຽນ, ໂຮງໝໍ, ການບໍລິຈາກເລືອດ ແຈກອຸປະກອນກິລາ ແລະ ການສຶກສາ ໃນເຂດຫ່າງໄກສອກຫລີກ ແລະ ຊ່ວຍບັນເທົາໄພພິບັດຕ່າງໆ.
- ສໍາຫລວດຄວາມເພິ່ງພໍໃຈຂອງລູກຄ້າ ແລະ ສຶກສາຄວາມຕ້ອງການ ຂອງລູກຄ້າກຸ່ມເປົ້າໝາຍ ເພື່ອປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ສົ່ງເສີມຈຸດແຂງ ຂອງບໍລິສັດໃຫ້ດີຂຶ້ນ.

- **ແຜນດ້ານວຽກງານບຸກຄະລາກອນໃນປີ 2021**
    - ພັດທະນາ ແລະ ຝຶກອົບຮົມພະນັກງານໃນການນຳໃຊ້ມາດຕະຖານລະບົບ ISO 9001 Version 2015 ທີ່ປັບປຸງໃໝ່, ທັກສະການແກ້ໄຂບັນຫາ ແລະ ການຕັດສິນໃຈຢ່າງເປັນລະບົບ.
